ບໍລິສັດ ປິໂຕຣລ້ຽມເທຣດດິ້ງລາວ ມະຫາຊົນ
PETROLEUM TRADING LAO PUBLIC COMPANY
ຖະໜົນ: ກຳແພງເມືອງ, ບ້ານໂພນທັນ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ, ສ ປ ປ ລາວ ໂທ: 856 21 264834-5 ແຟັກ: 856021 264836
Kampheangmueng Rd, Phonthan Village, Xaysettha District, Vientiane Capital, Lao P.D.R, Tel: 856 21 264834-5, Fax: 856021 264836

ເລກທີ: 04925 ປທລ/2025

ນະຄອນຫຼວງວຽງຈັນ, ວັນທີ: 6 ຕຸລາ 2025

ຮຽນ: ທ່ານ ຫົວໜ້າ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ
ທ່ານ ຜູ້ອຳນວຍການໃຫຍ່ ຕະຫຼາດຫຼັກຊັບລາວ
ບັນດາ ທ່ານ ຜູ້ຖືຮຸ້ນ ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ

ເລື່ອງ: ການແຈ້ງມະຕິສຳຄັນຂອງກອງປະຊຸມສະພາບໍລິຫານຄັ້ງທີ 3/2025

- ອີງຕາມຂໍ້ຕົກລົງວ່າດ້ວຍ ການລາຍງານ ແລະ ການເປີດເຜີຍຂໍ້ມູນ ສະບັບເລກທີ 15/ຄຄຊ, ລົງວັນທີ 11 ທັນວາ 2024;
- ອີງຕາມລະບຽບວ່າດ້ວຍ ການເປີດເຜີຍຂໍ້ມູນ ສະບັບເລກທີ 008/ຕລຊລ, ລົງວັນທີ 27 ກັນຍາ 2018.

ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ (“ບໍລິສັດ” ຫຼື “ປທລ”) ຂໍຖືເປັນກຽດແຈ້ງໃຫ້ທ່ານຊາບ ກ່ຽວກັບມະຕິທີ່ສຳຄັນຂອງກອງປະຊຸມສະພາບໍລິຫານຄັ້ງທີ 3/2025 ໃນວັນທີ 4 ຕຸລາ 2025 ດັ່ງລາຍລະອຽດລຸ່ມນີ້:

1. ຮັບຮອງເອົາ ບົດບັນທຶກກອງປະຊຸມສະພາບໍລິຫານ ຄັ້ງທີ 2/2025 ເມື່ອວັນທີ 19 ມີນາ 2025;
2. ຮັບຮອງເອົາ ເອກະສານລາຍງານການເງິນ 6 ເດືອນຕົ້ນປີ 2025 ທີ່ຜ່ານການກວດສອບ ຂອງຜູ້ກວດສອບພາຍນອກ ແລະ ບົດລາຍງານຜົນການດຳເນີນທຸລະກິດ ປະຈຳ 6 ເດືອນຕົ້ນປີ 2025.

ດັ່ງນັ້ນ, ຈຶ່ງຮຽນມາຍັງທ່ານເພື່ອຊາບ.

ດ້ວຍຄວາມເຄົາລົບ ແລະ ນັບຖືເປັນຢ່າງສູງ,

ປະທານສະພາບໍລິຫານ

ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ Petroleum Trading Lao Public Company

ສີລາ ວຽງແກ້ວ